ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**************************************

ທະນາຄານແຫ່ງ ສປປ ລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ 671 /ກຕຂ

ນະຄອນຫຼວງວຽງຈັນ, ວັນທີ 29 ພຶດສະພາ 2014

# ແຈ້ງການ

ຮຽນ: ທ່ານ ຫົວໜ້າ ທະນາຄານແຫ່ງ ສປປ ລາວ ພາກເໜືອ, ພາກກາງ ແລະ ພາກໃຕ້, ທີ່ນັບຖືຢ່າງສູງ

ເລື່ອງ: ການນຳໃຊ້ລະບົບເຄືອຂ່າຍສຳຮອງ (VPN).

- ອີງຕາມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 707/ທຫລ, ລົງວັນທີ 16 ສິຫາ 2014.

ກົມເຕັກໂນໂລຊີຂໍ້ມູນຂ່າວສານ ຂໍແຈ້ງມາຍັງທ່ານຊາບວ່າ: ຜ່ານການຕິດຕາມການນຳໃຊ້ລະບົບເຄືອຂ່າຍສຳຮອງ (VPN) ທີ່ທາງກົມເຕັກໂນໂລຊີຂໍ້ມູນຂ່າວສານ ໄດ້ຕິດຕັ້ງໃຫ້ເພື່ອນຳໃຊ້ໃນເວລາສຸກເສີນເຫັນວ່າ: ຍັງບໍ່ທັນໄດ້ຖືກນຳໃຊ້ຢ່າງຈິງຈັງ, ສະນັ້ນ ເພື່ອຮັບປະກັນການຕອບສະໜອງໃນການນຳໃຊ້ໂປຣແກຣມ ບັນຊີ ໃຫ້ມີຄວາມເປັນປົກກະຕິຕໍ່ເນື່ອງຂຶ້ນກວ່າເກົ່າ ແລະ ເພື່ອໃຫ້ພະນັກງານມີຄວາມຊຳນິຊຳນານໃນການໃຊ້ລະບົບນີ້ ທາງກົມຂອງພວກເຮົາຈິ່ງຂໍຄວາມຮ່ວມມືມາຍັງທ່ານເພື່ອຊີ້ນຳ ພະນັກງານຂອງທ່ານໃຫ້ນຳໃຊ້ລະບົບດັ່ງກ່າວນີ້ຢ່າງໜ້ອຍເດືອນໜຶ່ງ 2 ເທື່ອ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຊາບ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ

ທະນາຄານແຫ່ງ ສປປ ລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ພານທອງ ກອງວົງສາ